# ຄູ່ມືແນະນຳ ແລະ ການນຳໃຊ້

## ແນວພັນເຂົ້າ ຫ້ວຍໂຄດ1 (Houaykhot 1)



ສະຖາບັນຄົ້ນຄວ້າກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ
ອົງການອອກຟາມ
ພະແນກກະສິກຳ ແລະ ປ່າໄມ້ ແຂວງຫລວງພະບາງ
ສູນຄົ້ນຄ້ວາກະສິກຳເຂດເນີນສູງ

# ປະຫວັດຂອງແນວພັນ

ແນວພັນຫ້ວຍໂຄດ1 (HK1) ແມ່ນແນວພັນທີ່ໄດ້ປະສົມຈາກສູນຄົ້ນຄວ້າເຂົ້ານາພອກ ລະຫວ່າງ ແນວພັນເຂົ້າເມືອງງາ (ຕົ້ນແມ່) ກັບ ແນວພັນ TDK7 (ຕົ້ນພໍ່). ໃຊ້ຮູບແບບປະສົມພັນແບບດ່ຽວ ໃນລະດູແລ້ງ 2007-08, ປູກຄັດເລືອກທີ່ສູນ ຮອດຊົ່ວທີ 4 ແລ້ວສົ່ງໄປຄັດເລືອກທີ່ສູນຄົ້ນຄ້ວາກະສິກຳເຂດເນີນສູງ ບ້ານຫ້ວຍໂຄດ ເມືອງຊຽງເງິນ ແຂວງຫຼວງພະບາງ. ຄັດເລືອກຕໍ່ໃນຊົ່ວທີ 5 ແລະ 8 ໃນລະດູ ແລ້ງ 2016-2017 ແມ່ນ ທ່ານແຄມ ບ້ານຊຽງເງິນ, ເມືອງຊຽງເງິນ ປູກຂະຫຍາຍ, ທົດສອບການກິນດີ ແລະ ປູກຂະຫຍາຍເມັດພັນ, ແລກປ່ຽນ, ແຈກຢາຍ ໃນບ້ານ ແລະ ບ້ານອື່ນໆ ມາເຖິງປະຈຸບັນຂະຫຍາຍໄປຫຼາຍບ້ານເຊັ່ນ: ບ້ານຊຽງເງິນ, ບ້ານນາຄ່າ, ບ້ານຫ້ວຍໂຄດ, ບ້ານໂພນໄຊ, ບ້ານຖິ່ນແກ້ວ ເມືອງຊຽງເງິນ. ບ້ານນະຄອນ ເມືອງນໍ້າບາກ, ບ້ານຄືກຢາ ເມືອງຫຼວງພະບາງ, ບ້ານສີບຄານ, ບ້ານເມືອງງອຍເກົ່າ, ເມືອງງອຍ ແຂວງຫຼວງພະບາງ (ການແພ່ກະຈາຍໃນຮອບທີ່1). ຈາກນັ້ນ ໃນລະດູຝົນປີ 2020 ຈຶ່ງໄດ້ນຳເອົາແນວພັນດັ່ງກ່າວໄປປູກສາທິດຄືນ ຢູ່ບ້ານນາຄ່າ, ເມືອງຊຽງເງິນ, ແຂວງຫຼວງພະບາງ. ຈາກການເຊີນຊາວນາທີ່ຢູ່ອ້ອມຂ້າງມາຮ່ວມປະເມີນຜົນ ແລ້ວເຫັນວ່າມີຊາວນາຫຼາຍຄົນກໍ່ໃຫ້ຄວາມສົນໃຈ ແຕ່ມີພຽງ ທ່ານພູ ຊາວນາຈາກບ້ານຊຽງເງິນ, ເມືອງຊຽງເງິນ, ແຂວງຫຼວງພະບາງ. ຜູ້ດຽວທີ່ນຳເອົາແນວພັນດັ່ງກ່າວໄປປູກ ແລະ ທົດສອບການກິນຄືນໃໝ່ ໃນລະດູແລ້ງ 2021. ກໍ່ເຫັນວ່າໄດ້ຮັບຜົນຜະລິດດີ ແລະ ການກິນກໍ່ແຊບ, ຈາກນັ້ນ ຈຶ່ງປູກຂະຫຍາຍໃນພື້ນທີ່ກ້ວາງຂອງຕົນເອງໃນລະດູຝົນ 2021 ແລະ ແຈກຢາຍໃຫ້ຊາວນາອ້ອມຂ້າງ ຈຳນວນໜຶ່ງ. ຈາກຜົນໄດ້ຮັບໃນລະດູຝົນກໍ່ຍິ່ງມີຊາວນາຈຳນວນຫຼາຍມາຈັບຈອງ, ແລກປ່ຽນ ແລະ ຂໍຊື້ ໄປເຮັດແນວປູກ ໃນລະດູນາແຊງ 2022 ເປັນຈຳນວນ 600 ກິໂລ ສາມາດປູກໄດ້ໃນເນື້ອທີ່ 15 ເຮັກຕ່າ. ຈາກນັ້ນກໍ່ຂະຫຍາຍອອກສູ່ວົງກ້ວາງ ໄປຕ່າງແຂວງຄື: ໄຊຍະບູລີ, ແຂວງວຽງຈັນ, ແຂວງອຸດົມໄຊ ແລະ ແຂວງຫຼວງນໍ້າທາ ເປັນຈຳນວນເມັດພັນ 1200 ກິໂລ ສາມາດປູກໄດ້ໃນເນື້ອທີ່ 30 ເຮັກຕາ ພາຍໃນ 2 ປີ ຫຼື 4 ລະດູການຜະລິດເຂົ້ານາ (ການແພ່ກະຈາຍໃນຮອບທີ່2). ເຫັນວ່າຜົນຜະລິດ ຕັ້ງແຕ່ 4 ຫາ 6 ໂຕນ/ເຮັກຕາ.

## ລັກສະນະເດັ່ນຂອງແນວພັນ ຫ້ວຍໂຄດ1



1. ເໝາະກັບດິນ ນາຮ່ອມພູ
2. ປັບຕົວກັບສະພາບແວດລ້ອມໄດ້ດີ
3. ທົນບົ່ວໄດ້ດີ
4. ຜົນລິດດີ 4-6 ໂຕນ/ເຮັກຕາ

**ຕາຕະລາງປຽບທຽບລັກຊະນະ ຫ້ວຍໂຄດ1 ກັບພໍ່ແມ່ພັນ**

| ແນວພັນເຂົ້າ | ຫ້ວຍໂຄດ 1 | ເມືອງງາ | TDK 7 |
|---|---|---|---|
| ປະເພດເຂົ້າ | ເຂົ້າໜຽວ | ເຂົ້າໜຽວ | ເຂົ້າໜຽວ |
| ສີເມັດ | ສີເຟືອງກົ້ນຈຸດ | ສີເຟືອງແຊກດໍາ | ສີເຟືອງ |
| ອາຍຸ (ວັນ) | 130-135 | 145-150 | 130-135 |
| ລະດູປູກ | ປູກໄດ້ 2 ລະດູ | ປູກໄດ້ລະດູຝົນ | ປູກໄດ້ 2 ລະດູ |
| ລວງສູງ (ຊມ) | 90-100 | 120-130 | 90-100 |
| ເປີເຊັນການສີ (%) | >68 | 65.7 | 60 |
| ຜົນຜະລິດ (ໂຕນ/ເຮັກຕາ) | 4-6 | 3-5 | 4-6 |
| ການທົນທານຕໍ່ແມງບົ່ວ | ທົນທານ | ທົນທານ | ບໍ່ທົນທານ |



# ແນະນຳການປູກ



ແນວພັນ ຫ້ວຍໂຄດ1 ສາມາດປູກໄດ້ 2 ລະດູຄື: ນາແຊງ ແລະ ນາປີ.

**ວິທີການປູກ:**

- ນາດຳແມ່ນແນະນຳ ຕົກກ້າ ຊ່ວງ ເດືອນ ມີຖຸນາ (ນາປີ) ແລະ ທ້າຍເດືອນທັນວາ ຫາຕົ້ນເດືອນ ມັງກອນ (ນາແຊງ), ຕົ້ນກ້າໄດ້ 20-25 ວັນ ສາມາດນຳໄປ ປັກດຳໄດ້
- ສາມາດດຳໃນອັດຕາ 2-3 ກົບກ້າ ຕໍ່ສຸ່ມ

**ການໃສ່ຝຸ່ນ:**

- **ໃສ່ຮອງພື້ນ**: ໃສກ່ອນປັກດຳ ຫຼື ຫຼັງປັກດຳໄດ້ 5-7ມື້ ແມ່ນໃຫ້ໃສ່ຝຸ່ນ ປະສົມສູດ 15-15-15 ຫຼື ຝຸ່ນປະສົມສູດ16-20-00 ໃນອັດຕາ 200 ກລ/ຮຕ.
- **ໃສ່ເລັ່ງ**: ຄວນໃສ່ຝຸ່ນເລັ່ງ 2 ຄັ້ງ: ສູດ 46-0-0 ຫຼັງຈາກປັກດຳໄດ້ 25 ມື້ ແລະ 45 ມື້ ໃນອັດຕາ 30 ກລ/ຮຕ/ຄັ້ງ.



**ການເກັບກ່ຽວ**

ເໝາະສົມກັບການນຳໃຊ້ກົນຈັກເກັບກ່ຽວ ເພາະເປັນຕົ້ນເຂົ້າໃຫຍ່ ແລະ ແຂງ, ສາມາດ ເກັບກ່ຽວໄດ້ພາຍໃນ 30 ວັນ ພາຍຫຼັງເຂົ້າ ອອກດອກໄດ້ 50%, ບໍ່ຄວນກ່ຽວຊ້າກ່ວານີ້ ເພາະຈະເຮັດໃຫ້ເຂົ້າຫັກໃນເວລານຳໄປສີ ຈະ ເຮັດໃຫ້ເປີເຊັນເຂົ້າສານປະເພດ 1 ຕໍ່າ, ຖ້າໃຊ້ ແຮງງານຄົນເກັບກ່ຽວຄວນຕາກຝ່ອນເຂົ້າໃນທົ່ງ ນາປະມານ 2 ແດດ ຈຶ່ງເກັບກູ້ ແລະ ຟາດຕີ


**ຕິດຕໍ່ປະສານແນວພັນ**

ສູນຄົ້ນຄ້ວາກະສິກຳເຂດເນີນສູງ (ປອ. ຄຳດອກ ຊົງປີຄັ້ງຊີທໍ່)

ອີແມວ: khamdok.s@gmail.com

ໂທ: 020 55673953